**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 1680/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 24/07/2020

# ໃບລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ,

ເລື່ອງ: ແຈ້ງມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020.

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ("ບໍລິສັດ") ຂໍຖືເປັນກຽດແຈ້ງມະຕິ ຂອງກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2020 ວັນທີ 24 ກໍລະກົດ 2020, ດັ່ງມີລາຍລະອຽດລຸ່ມນີ້:

ວາລະທີ 1. ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2019, ວັນທີ 29 ພຶດສະພາ 2020. ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງ ຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.513.690.463 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 2. ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດ້ວຍຄະນະ ເພື່ອປ່ຽນແທນຜູ້ອຳນວຍການໃຫຍ່ຜູ້ເກົ່າ ພ້ອມດ້ວຍຄະນະທີ່ເຂົ້າຮັບກະສຽນບຳເນັດຄື:

1) ຮັບຮອງການແຕ່ງຕັ້ງ ທ່ານ ດວງສີ ພາຣະຍົກ ເປັນຜູ້ອຳນວຍການໃຫຍ່ຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນຜູ້ອຳນວຍການໃຫຍ່ຜູ້ເກົ່າ;
2) ຮັບຮອງການແຕ່ງຕັ້ງ ທ່ານ ທອງເພັດ ດ້ວງເງິນ ເປັນຮອງຜູ້ອຳນວຍການໃຫຍ່;
3) ຮັບຮອງການແຕ່ງຕັ້ງ ທ່ານ ວິງສະກຸນ ຍິ່ງຍົງ ເປັນຮອງຜູ້ອຳນວຍການໃຫຍ່;
4) ຮັບຮອງການແຕ່ງຕັ້ງ ທ່ານ ນາງ ສຸກສັນ ພົງພິລາ ເປັນຮອງຜູ້ອຳນວຍການໃຫຍ່;
5) ຮັບຮອງການແຕ່ງຕັ້ງ ທ່ານ ວັນແສງ ວັນນະວົງ ເປັນຮອງຜູ້ອຳນວຍການໃຫຍ່ ສາຍງານການເງິນ.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປນ. 2392
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

- **ເຫັນດີຈຳນວນ 1.513.690.463 ສຽງ, ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 3. ຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ເຂົ້າກະສຽນບຳເນັດ, ການກຳນົດຜູ້ທີ່ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິຫານບໍລິສັດຄື:

1) ແຕ່ງຕັ້ງທ່ານ ຈັນທະບູນ ສຸກອາລຸນ ຜູ້ວ່າການຜູ້ອຳນວຍການໃຫຍ່ລັດວິສາຫະກິດໄຟຟ້າລາວ ເປັນຮອງປະທານສະພາບໍລິຫານ ເພື່ອປ່ຽນແທນຮອງປະທານສະພາບໍລິຫານຜູ້ເກົ່າ ທີ່ເຂົ້າກະສຽນບຳເນັດ.
2) ແຕ່ງຕັ້ງທ່ານ ດວງສີ ພາຣະຍົກ ຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ເປັນກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ທີ່ເຂົ້າກະສຽນບຳເນັດ.

ກຳນົດຜູ້ມີອຳນາດໃນການລົງລາຍເຊັນສັນຍາຜູກພັນບໍລິສັດດັ່ງນີ້:

ກ). ໃຫ້ປະທານສະພາບໍລິຫານ, ຮອງປະທານສະພາບໍລິຫານ ຫລື ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ປະທັບກາບໍລິສັດແຕ່ພຽງຜູ້ດຽວ ຫລື;

ຂ). ໃຫ້ກຳມະການທ່ານອື່ນ ສອງທ່ານລົງລາຍເຊັນຮ່ວມກັນ ແລະ ປະທັບກາບໍລິສັດ.

ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານທັງໝົດບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ເປັນຕົ້ນໄປ.

ກອງປະຊຸມໄດ້ມີມະຕິດ້ວຍຄະແນນສຽງຫລາຍກວ່າເຄິ່ງໜຶ່ງ ຂອງຈຳນວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:

- **ເຫັນດີຈຳນວນ 1.513.590.464 ສຽງ, ເທົ່າກັບ 99,993 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**
- **ບໍ່ເຫັນດີຈຳນວນ 99.999 ສຽງ, ເທົ່າກັບ 0,007 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

ວາລະທີ 4. ຮັບຮອງການດັດແກ້ກົດລະບຽບ ຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານຄື:

1) ດັດແກ້ມາດຕາ 9 ວ່າດ້ວຍກຳມະການ: ປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານ.
2) ດັດແກ້ມາດຕາ 12 ວ່າດ້ວຍສະພາບໍລິຫານ: ປ່ຽນຊື່ ແລະ ຂໍ້ມູນຂອງຮອງປະທານສະພາບໍລິຫານ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼືບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບ ຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິ ດ້ວຍຄະແນນສຽງຫລາຍກວ່າສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫລາຍກວ່າ 80 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ, ດັ່ງນີ້:

(ກ) ຈຳນວນຄົນຂອງຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ **194** ຄົນ ເທົ່າກັບ **99,49** ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.
2. ບໍ່ເຫັນດີ **01** ຄົນ ເທົ່າກັບ **0,51**ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(ຂ) ຈຳນວນຮຸ້ນ (ສຽງ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:

1. ເຫັນດີ **1.513.673.797** ຮຸ້ນ (ສຽງ), ເທົ່າກັບ **90,137** ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.
2. ບໍ່ເຫັນດີ **16.666** ຮຸ້ນ (ສຽງ), ເທົ່າກັບ **0,001** ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຮຽນມາຍັງທ່ານເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ,

**ປະທານສະພາບໍລິຫານ**

ກະຊວງ ພະລັງງານ ແລະ ບໍ່ແຮ່
ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
EDL-Generation Public Company
ນະຄອນຫຼວງວຽງຈັນ

ປອ. ຄຳມະນີ ອິນທິລາດ